## ພາຣິຍ

ກົມວັນນະຄະດີລາວແຫ່ງກະຊວງສຶກສາທິການ ໄດ້ຮວບຮວມເອົາຂໍ້ມູນກ່ຽວກັບການປະພັນ ນຳມາເຜີຍແຜ່ແກ່ມວນຊົນຄົນລາວເຮົາ ແຕ່ເຖິງປານນັ້ນ ພາກສ່ວນທີ່ຍັງຄ້າງຄາຢູ່ ຫລື ທີ່ຍັງບໍ່ທັນໄດ້ສຶກສາເທື່ອກໍຍັງມີຫລາຍ ເນື່ອງຈາກເຫດການບ້ານເມືອງບໍ່ອຳນວຍໃຫ້ ຄື ຍ້ອນເສິກເສືອເຫນືອໃຕ້ນັ້ນເອງນຶ່ງ ເນື່ອງຈາກປະເທດລາວພວມກຳລັງປົດແອກອອກຈາກການປົກຄອງຂອງຝຣັ່ງໃຫມ່ໆເມື່ອ ຄສ. ໑໙໕໔ ຄື ການທີ່ລາວໄດ້ຮັບເອກຣາດຈາກຝຣັ່ງແລະໄດ້ປົກຄອງຕົນເອງນຶ່ງ

ໃນເມື່ອມອງເຫັນຄົນລາວຍັງນິຍົມຂຽນກາບກອນ ຂ້າພະເຈົ້າຈຶ່ງຕັດສິນໃຈຂຽນກົດເກນ ຂໍ້ຣະບຽບ ຫລື ຂໍ້ບັງຄັບ ຂັ້ນພື້ນຖານສຳລັບການຂຽນກອນລາວ ເພື່ອການເຜີຍແຜ່ໃນດ້ານນີ້ ທັງໆທີ່ ຂ້າພະເຈົ້າເອງກະບໍ່ແມ່ນນັກແຕ່ງກອນແຕ່ຢ່າງໃດ («ກະ» ໃຊ້ໃນການປາກເວົ້າ ສ່ວນ «ກໍ» ໃຊ້ໃນການຂີດຂຽນ)

ກອນລາວມີຢູ່ດ້ວຍກັນຫລາຍປະເພດ ແລະ ແຕ່ລະປະເພດກໍແຕກຕ່າງກັນທາງດ້ານໂຄງຮ່າງແລະດ້ານການສັມຜັດ ຈະເປັນການສັມຜັດສຽງຫລືຈະເປັນການສັມຜັດພຍັນຊນະກໍດີ ແຕ່ຫາກວ່າ ຂໍ້ບັງຄັບໃນທີ່ນີ້ ຈະເນັ້ນຫນັກໃສ່ກອນໂຄງເຈັດເທົ່ານັ້ນ ສ່ວນຂໍ້ບັງຄັບຂອງກອນຊນິດອື່ນໆ ຫາກມີ ກໍອາດຈະຖືກຂຽນລົງເພື່ອການປຽບທຽບຢ່າງດຽວ

## ໂຄງຮ່າງຂອງກອນລາວ

ກອນ ເປັນຄຳມູນຂອງລາວ ແຕ່ ກາບ ມີເຄົ້າມາຈາກບາລີ ສ່ວນ ບົດ ກັບ ບາດ ອາດຈະມີເຄົ້າມາຈາກຄຳດຽວກັນຄືຄຳ (Pada/បទ[ບົທ/ບາທ]) ຊຶ່ງ ບາດນຶ່ງ ກໍປຽບສເມືອນ ວັກນຶ່ງນັ້ນເອງ ແຕ່ໃນທີ່ນີ້ ຂ້າພະເຈົ້າຈະໃຊ້ຄຳວັກ ຕາມຄວາມນິຍົມຂອງຄົນລາວ ເຖິງແມ່ນວ່າ ຄຳນີ້ມີຄວາມຫມາຍຢ່າງດຽວກັນກັບຄຳວັກ ທີ່ໃຊ້ຂຽນປໂຍກກໍຈິງ




ຮູປຕາ ໑

ໂຄງຂອງກອນທີ່ມີຖ້ອຍຄຳ ເຈັດຄຳຂຶ້ນໄປ ເພິ່ນຈັດເປັນບົດ ຊຶ່ງບົດນຶ່ງຕ້ອງມີສີ່ວັກ ແລະ ວັກນຶ່ງໆ ຕ້ອງມີ ເຈັດຄຳ ແລະ ຄຳໃດທີ່ເປັນພຍັນຊນະນຳ ເຊັ່ນ ພຍັນຊນະຄວບ ພຍັນ-ຊນະຈຽ ແລະຍັນຊນະປະສົມ ຖ້າວ່າ ຄຳນັ້ນອ່ານອອກເປັນສອງພຍາງ ເພິ່ນຈະນັບ ຄຳນັ້ນເຫມືອນກັບຄຳທີ່ມີແຕ່ພຍາງດຽວເຊັ່ນຄຳ ຖນອມ ສນອງ ສລາດ ເປັນຕົ້ນ ແລະ ກໍຈະນັບຈຳນວນພຍາງຂອງຈຳພວກຄຳທີ່ມີສາມພຍາງນັ້ນເປັນສອງພຍາງເຊັ່ນ ປາຖນາ ວາສນາ ຄາຕກອນ ດັ່ງນີ້ເປັນຕົ້ນ

ແຕ່ລະບົດຈະມີສີ່ວັກຫລືສີ່ແຖວຕລອດໄປ ແລະ ວັກທຸກອັນກໍມີຊື່ປະຈຳວັກສເມີ ເຊັ່ນ ສະດັບ ເປັນຊື່ຂອງວັກທີນຶ່ງ ຮັບເປັນຊື່ຂອງວັກທີສອງ ຮອງເປັນຊື່ຂອງວັກທີສາມ ແລະ ສົ່ງເປັນຊື່ຂອງວັກທີສີ່ ສ່ວນວ່າ

ວັກນຶ່ງໆນັ້ນຈະມີເຈັດຄຳສເມີ ອັນຫມາຍເຖິງ ບົດນຶ່ງຈະຕ້ອງມີຊາວແປດຄຳ ຢ່າງຕ່ຳສຸດ

ຕົວເລກທີ່ຫມາຍຢູ່ໃນ ຮູປຕາ ໑ ຂ້າງເທິງນີ້ ອັນມີ ໑ ໒ ນີ ໔ ໕ ຝ ໗ ຫມາຍເຖິງລຳດັບແລະຕົວສຸດທ້າຍນັ້ນ (ເລກເຈັດ) ສະແດງເຖິງຈຳນວນທັງຫມົດຂອງຄຳມູນລາວ ທີ່ເພິ່ນສົມມຸດເອົາຄຳນຶ່ງໆຈະຕ້ອງມີພຽງແຕ່ພຍາງດຽວເທົ່ານັ້ນ (ກອນວັກນຶ່ງຕ້ອງມີເຈັດພຍາງແລະບົດນຶ່ງຕ້ອງມີຊາວແປດພຍາງ)

## ກອນລຳໂດຍສັງເຂບ

ກອນລຳ ສ່ວນມາກແລ້ວຈະເປັນກອນຊະນິດໃດກໍໄດ້ ແລະ ຂ້າພະເຈົ້າຈະບໍ່ຂໍກ່າວເຖິງມັນເທື່ອ ຢູ່ໃນບົດນັ້ນນີ້ ມີແຕ່ຢາກຕື່ມຂໍ້ສັງເກດເພີ່ມເຕີມ ເພື່ອໃຫ້ຮູ້ເຖິງການຂຶ້ນກອນລຳໂດຍຖືເອົາພຽງແຕ່ວັກສາມກັບວັກສີ່ເປັນບົດທຳອິດໄດ້ ຫລັງຈາກນັ້ນຈຶ່ງຕໍ່ໃສ່ຈຳພວກບົດທີ່ມີສີ່ວັກ ຕາມປົກຕິ ດັ່ງນີ້ຕລອດໄປ

## ການສັມຜັດ

ສັມຜັດ ມີເຄົ້າມາຈາກຄຳບາລີ ສັມຜັສສະ ແລະແປວ່າ ແຕະຕ້ອງ ຊຶ່ງເພິ່ນເອົາໂຄງຂອງກອນແຕ່ລະໂຄງມາຈຸກັນເຫມືອນດັ່ງດຽວກັບກອນຂອງຫລັງຄາເຮືອນນັ້ນ ສ່ວນການສັມຜັດ ຈະມີຫລາຍປະເພດ ແລະຈະບໍ່ຖືກນຳມາກ່າວໃນບັ້ນນີ້ເທື່ອ ນອກຈາກການສັມຜັດທີ່ຖືກຫມາຍໄວ້ໃນ ຮູປຕາ ໑ ດັ່ງນີ້

– ຄຳສຸດທ້າຍຂອງວັກທີນຶ່ງ ສາມາດສັມຜັດກັບຄຳນຶ່ງ ກັບຄຳສອງ ຫລື ກັບຄຳສາມ ຂອງ ວັກສອງ

– ຄຳສຸດທ້າຍຂອງວັກສອງ ສາມາດສັມຜັດກັບຄຳນຶ່ງ ກັບຄຳສອງ ຫລື ກັບຄຳສາມ ຂອງ ວັກສາມ

– ຄຳສຸດທ້າຍຂອງວັກສາມ ສາມາດສັມຜັດກັບຄຳນຶ່ງ ກັບຄຳສອງ ຫລື ກັບຄຳສາມ ຂອງ ວັກສີ່

ສິ່ງເຫລົ່ານີ້ ຄື ຂໍ້ບັງຄັບພື້ນຖານຂອງກອນລາວ ແຕ່ເພິ່ນກະບໍ່ໄດ້ຫ້າມທ່ານສັມຜັດຄຳສຸດທ້າຍຂອງວັກສີ່ໃສ່ກັບຄຳໃດຄຳນຶ່ງ ໃນວັກສະດັບຂອງບົດຕໍ່ໄປ ແບບດັ່ງກອນລຳ ນອກຈາກການສັມຜັດພື້ນຖານອັນນີ້ແລ້ວ ອັນທີ່ເພິ່ນຮຽກກັນວ່າ ການສັມຜັດນອກ ຍັງມີ ການສັມຜັດໃນ ເຊັ່ນ ການສັມຜັດສຽງ ຫລືການສັມຜັດສຣະ ການສັມຜັດສຣະຫຽມຄູ່ ການສັມຜັດຫຽມແອກ ແລະ ການສັມຜັດພຍັນຊະນະ ດັ່ງນີ້ເປັນຕົ້ນ

ຍັງມີສິ່ງທີ່ຂ້າພະເຈົ້າບໍ່ທັນໄດ້ກ່າວເຖິງນັ້ນກໍຄື ການສັມຜັດສຽງເອກສຽງໂທ ທີ່ເພິ່ນວາງປະໄວ້ເປັນຣະບຽບ ໂດຍຖືເປັນຂໍ້ບັງຄັບທັງນັ້ນ ອັນມີ ສຽງເອກທີກຕົວ ແລະ ສຽງໂທຫ້າຕົວ (ຮູປຕາ ໑) ຊຶ່ງສຽງໂທຫມາຍເຖິງຄຳທີ່ປະກອບດ້ວຍວັນນະຍຸດໂທ ແລະ ສຽງເອກ ຫມາຍເຖິງຄຳທີ່ປະກອບວັນນະຍຸດເອກອີກປະການນຶ່ງ ຈຳພວກຖ້ອຍຄຳທີ່ສະກົດດ້ວຍຕົວ ◌ກ◌ ◌ດ◌ ◌ບ◌ ປັສຈາກວັນນະຍຸດເອກກໍປຽບເຫມືອນຄຳທີ່ມີສຽງເອກ ພ້ອມດຽວກັນນີ້ ຈຳພວກຖ້ອຍຄຳທີ່ສະກົດດ້ວຍພຍັນຊະນະສາມຕົວນີ້ ໂດຍສ່ວນມາກແລ້ວຈະເປັນຖ້ອຍຄຳທີ່ມີສຽງຕາຍທັງນັ້ນ ພຍາງຕາຍຫມາຍເຖິງພຍາງທີ່ບໍ່ສາມາດຈະຜັນສຽງຕາມຮູບວັນນະຍຸດໄດ້ ດ້ວຍເຫດນີ້ ການແຕ່ງເພງຈຶ່ງຕັ້ງເປັນບັນຫາໃຫ້ແກ່ນັກປະພັນທີ່ບໍ່ຄ່ອຍສົນໃຈໃນພາສາລາວ ແລະ ໃນຄົ້ນສຽງຂອງຖ້ອຍຄຳລາວໂດຍສະເພາະ ອັນເປັນເຫດໃຫ້ມີສຽງໂທນັ້ງ

(ພຍາງທ້າຍ ຂອງພຍັນຊນະປະສົມ ພາກສ່ວນນຶ່ງຂອງພຍັນຊນະຈຽງ ແລະ ພຍາງຄວບບາງຄຳ ຈະມີ ສຽງສູງສເມີ ນອກຈາກສຽງສູງກາງຕ່ຳແລ້ວ ເຮົາຕ້ອງຮູ້ຈັດ ສຽງເອກ ສຽງໂທຂຶ້ນ ແລະ ສຽງໂທລົງ ອີກດ້ວຍ)

## ຄຳບຸພບົດແລະຄຳສ້ອຍ

ບຸພພະ ແປວ່າ ກ່ອນ ຊຶ່ງເພິ່ນຕັດຕົວ ◌ພ◌ ອອກຕົວນຶ່ງ ຈຶ່ງຂຽນເປັນ ບຸພບົດ (ບົດກ່ອນ) ແລະ ເປັນຄຳທີ່ເພິ່ນເອົາມາວາງໄວ້ຂ້າງຫນ້າຂອງວັກແຕ່ລະວັກທີ່ມີເຈັດຄຳນັ້ນ ຕາມປົກຕິ ຈຳນວນຄຳບຸພບົດທີ່ເພິ່ນສາມາດເອົາມາວາງຕໍ່ຫນ້າວັກຫລືຫນ້າກອນນັ້ນ ຈະຈຳກັດຢູ່ພາຍໃນຈຳນວນສອງຫາສີ່ (ພຍາງ)




ຮູປຕາ ໒

ສ້ອຍ ເປັນຄຳລາວ ແລະ ຫມາຍເຖິງການທີ່ເພິ່ນເອົາສິ່ງໃດສິ່ງນຶ່ງມາຮ້ອຍເຂົ້າໃສ່ກັນຄືດັ່ງ ສາຍສ້ອຍ ນັ້ນເອງ ແຕ່ໃນທີ່ນີ້ຫມາຍເຖິງຖ້ອຍຄຳທີ່ເພິ່ນເອົາມາວາງເສີມໃສ່ທ້າຍວັກ ຊຶ່ງຈຳນວນຂອງມັນຈະບໍ່ເກີນ ສອງຄຳ ຫລື ສອງພຍາງ ຢ່າງສູງສຸດ

## ສລຸບຄວາມ

ຫວັງວ່າການຂຽນອັນນ້ອຍໆສັ້ນໆອັນນີ້ຄົງເປັນຜົນປໂຍດໃຫ້ແກ່ຜູ້ໃຊ້ທຸກຄົນ ຖ້າໂອກາດອຳນວຍ ໃຫ້ ຂ້າພະເຈົ້າຈຶ່ງຈະຂຽນໃຫມ່

ຂໍອຸທິດສິ່ງເລັກໆນ້ອຍໆອັນນີ້ແດ່ພໍ່ແມ່ແລະຄອບຄົວພ້ອມດ້ວຍຄຣູບາອາຈານ

ຂໍອຸທິດສິ່ງເລັກໆນ້ອຍໆອັນນີ້ແດ່ລູກຫລານພ້ອມດ້ວຍຄົນລາວທຸກຖ້ວນຫນ້າ

ເມື່ອວັນທີ ໒໓/໐໓/໒໐໑໐ ເດືອນ ມີນາ ພສ. ໒໕໕໒ ແຫ່ງເມືອງ ປາຣີສ໌ ປະເທດ ຝຣັ່ງ

ໂດຍ ຄຳແພວ ພູເພັຊຣລິນທອງ

ກອນໂຄງ V2.00

# ປູ່ສອນຫລານ

ຂ້າລັກຫມີ ................... ຢ່າເອົາຫລາຍເທື່ອ
ງ້ວນກິນເບື່ອ ................. ຢ່າໄວ້ໃນເຮືອນ
ຄົນໃຈເບືອນ ................ ຢ່າເປັນພີ່ນ້ອງ
ມັນຈັກເປັນລ່ອງຄ້ອງ ....... ຄືກ່ຽວສອງຄົນ

ນ້ຳເຕັມໄຫ .................... ມອດໄຟບໍ່ໄດ້
ເພິ່ນນັ່ງໄຫ້ ................. ໂຕຢ່ານັ່ງຫົວ (◌ົວ ເປັນ ໂ◌)
ການຈຳໂຕ .................... ຫາໃຜບໍ່ໄດ້
ຝູງຫມູ່ໄກ້ ..................... ເຂົາບໍ່ມີກົວ

ເມັຽກັບຜົວ ................... ຢ່າທຳໃຈເຊື່ອ
ບາດລາງເທື່ອ ............. ມັນເບື່ອໃຈຊັງ
ຄວາມໂມຫັງ ................. ມັນມາແລ່ນຕ້ອງ
ພີ່ແລະນ້ອງ .................. ບໍ່ແນ່ນໃຈດຽວ

ເພິ່ນຫຽວຫາ ................ ຢ່າໄດ້ຂຽວຄ່ຳ
ໄປທາງຕ່ຳ .................. ໃນປ່າດົງຫລວງ (◌ວງ ເປັນ ໂ◌ນ? ພິສູດຍັງບໍ່ທັນໄດ້)
ເຂົາຄວາຍໂທນ ............. ຢ່າເຮັດດ້າມພ້າ
ທັງສາດຄລ້າ ............... ຢ່າໄດ້ປູເຮືອນ

ຄົນໃຈເບືອນ ................ ຢ່າເອົາເປັນມິດ